ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນາຍົກລັດຖະມົນຕີ

ເລກທີ 133 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 16.12.2022

ສູນສະຖິຕິແຫ່ງຊາດ
ຫ້ອງການ
ຂາເຂົ້າ ເລກທີ 1415
ລົງວັນທີ 28/12/22

## ຂໍ້ຕົກລົງ

## ວ່າດ້ວຍການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສທົ່ວປະເທດ ຄັ້ງທີ V ໃນປີ 2025

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ), ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍສະຖິຕິ (ສະບັບປັບປຸງ) ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017, ມາດຕາ 19 ຂໍ້ 1 ວ່າດ້ວຍພາກສ່ວນຈັດຕັ້ງປະຕິບັດການສຳຫຼວດ;
- ອີງຕາມ ດຳລັດ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ແບບຍືນຍົງ 2016-2025 ແລະ ວິໄສທັດ ຮອດປີ 2030 ສະບັບເລກທີ 142/ລບ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ການສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ເລກທີ 2720/ກຜທ, ລົງວັນທີ 17 ພະຈິກ 2022.

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການ
ຂາເຂົ້າ ເລກທີ 9739
ວັນທີ 21 12 2022
ລົງເຖິງ..................

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕົກລົງ:**

ໃບກົດສຳພັນ ກຜທ

ຮຽນ: ☑ ທ່ານ ຄຳເຈນ ວົງໂພສີ, ລັດຖະມົນຕີ ກຜທ

☐ ທ່ານ ນາງ ຄຳຈັນ ວົງແສນບຸນ ຮອງລັດຖະມົນຕີ ກຜທ

☐ ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ ກຜທ

☐ ທ່ານ ປອ ສະຖາບັນດິດ ອິນສີຊຽງໃໝ່ ຮອງລັດຖະມົນຕີ ກຜທ

☐ ທ່ານ ນາງ ພອນສະຫຼີ ສຸກສະຫວັດ ຫົວໜ້າສູນສະຖິຕິແຫ່ງຊາດ

☐ ທ່ານ ວຽງສະຫວັນ ວິໄລພອນ ຮອງປະທານຄະນະກຳມະການຮ່ວມມື ລາວ-ຫວຽດນາມ

☐ ທ່ານ ໄຊຊະນະ ສິດທິພອນ ຮອງປະທານຄະນະກຳມະການຮ່ວມມືລາວ-ຈີນ

ຈຸດປະສົງເພື່ອ:

☑ ຂໍທິດຊີ້ນຳ/ຄຳເຫັນ ○ຂໍອະນຸມັດດ້ານຫຼັກການ ○ ຂໍລາຍເຊັນ ○ ລາຍງານເພື່ອຊາບ ○ ....................

ຫົວໜ້າຫ້ອງການ ວັນທີ 21/12/2022, ເວລາ 8:10 ໂມງ.

ອຸດະແກ້ວ ແກ້ວດວງສິນ

| ຄຳເຫັນຂອງຄະນະກົມ ແລະທຽບເທົ່າກ່ຽວຂ້ອງ | ຄຳເຫັນຂອງຄະນະນຳ ກຜທ |
| --- | --- |
| | – ສູນສະຖິຕິ ແຫ່ງຊາດ – ຜສ ນະ ... 27/12/2022 ຄຳເຈນ ວົງໂພສີ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ນາຍົກລັດຖະມົນຕີ

ເລກທີ 133 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 16.12.2022

ສູນສະຖິຕິແຫ່ງຊາດ
ຫ້ອງການ
ຂາເຂົ້າ ເລກທີ 1415
ລົງວັນທີ 28/12/22

# ຂໍ້ຕົກລົງ

## ວ່າດ້ວຍການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ໃນປີ 2025

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ), ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍສະຖິຕິ (ສະບັບປັບປຸງ) ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017, ມາດຕາ 19 ຂໍ້ 1 ວ່າດ້ວຍພາກສ່ວນຈັດຕັ້ງປະຕິບັດການສໍາຫຼວດ;
- ອີງຕາມ ດໍາລັດ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ແບບຍືນຍົງ 2016-2025 ແລະ ວິໄສທັດ ຮອດປີ 2030 ສະບັບເລກທີ 142/ລບ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ການສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ເລກທີ 2720/ກຜທ, ລົງວັນທີ 17 ພະຈິກ 2022.

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການ
ຂາເຂົ້າ ເລກທີ 9739
ວັນທີ 26.12.2022

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1:** ເຫັນດີໃຫ້ຈັດຕັ້ງປະຕິບັດການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ຕາມແຜນດໍາເນີນງານຂອງການສໍາຫຼວດໃຫຍ່ ໃນທຸກໆ 10 ປີ ທີ່ໄດ້ລະບຸໄວ້ໃນ ກົດໝາຍວ່າດ້ວຍສະຖິຕິ.

**ມາດຕາ 2:** ງົບປະມານສໍາລັບການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ແມ່ນນໍາໃຊ້ງົບປະມານແຫ່ງລັດປະຈໍາປີ 2023, 2024 ແລະ 2025 ແລະ ລະດົມທຶນຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ.

**ມາດຕາ 3:** ເຫັນດີແຕ່ງຕັ້ງຄະນະຊີ້ນໍາລະດັບຊາດ ແລະ ຫົວໜ້າຄະນະຊີ້ນໍາຂັ້ນແຂວງ ເພື່ອຊີ້ນໍາ ແລະ ຈັດຕັ້ງປະຕິບັດການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 4:** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫຼວງ, ບັນດາແຂວງ, ບັນດາເມືອງ ແລະ ພາກສ່ວນທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ປະຕິບັດຕາມພາລະບົດບາດຢ່າງເຂັ້ມງວດ.

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ຈະໝົດສິດນໍາໃຊ້ນັບແຕ່ມື້ປະກາດຜົນການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ຢ່າງເປັນທາງການ.

**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

**ພັນຄໍາ ວິພາວັນ**